# ຫົວບົດສອບເສັງປະຈຳເດືອນເມສາ2024
# ວິຊາຟີຊິກສາດ ຊັ້ນ ມ.6

ຊື່ ແລະນາມສະກຸນ:______________________________ ຫ້ອງ: ______________

**I. ພາກປາລະໄນ**
**ຈົ່ງເລືອກຄຳຕອບທີ່ຖືກຕ້ອງທີ່ສຸດພຽງຂໍ້ດຽວ**

1. ຂໍ້ໃດຕໍ່ໄປນີ້ບໍ່ແມ່ນສົມຜົນຂອງຄວາມເຂັ້ມກະແສໄຟຟ້າ
ກ. I = Q/t ຂ. I = envtA ຄ. I = envA ງ. I = Nq/t

2. ຈຳນວນ " 96,5KC/mol" ແມ່ນຄ່າຂອງຫຍັງ?
ກ. ຕົວຄົງຂອງໂບນສະມານ ຂ. ຕົວຄົງຄ່າຂອງກູລົງ ຄ. ຕົວຄົງຄ່າຂອງຟາຣາໄດ ງ. ຕົວຄົງຄ່າຂອງກາສ

3. ຖ້າປ່ອຍໃຫ້ກະແສໄຟຟ້າ 125mA ແລ່ນຜ່ານສາຍນຳໄຟຟ້າເປັນເວລາ 5 ນາທີ ຈະມີໄຟຟ້າບັນຈຸແລ່ນຜ່ານຫຼາຍປານໃດ?
ກ. 3,75 C ຂ. 6,25 C ຄ. 37,5C ງ. 625 C

4. ໝໍ້ໄຟຟ້າໜ່ວຍໜຶ່ງ ສາມາດຈ່າຍປະລິມານໄຟຟ້າອອກທັງໝົດ 50 KC ຖ້າໝໍ້ໄຟຟ້າດັ່ງກ່າວຕ້ອງຈ່າຍໄຟຟ້າຢ່າງສະໝໍ່າສະເໝີ 0,02A ຈະສາມາດຈ່າຍກະແສໄຟຟ້າໄດ້ດົນສຸດເທົ່າໃດ?
ກ. 27 ວັນ ຂ. 28 ວັນ ຄ. 29 ວັນ ງ. 30 ວັນ

5. ໝໍ້ໄຟຟ້າໜ່ວຍໜຶ່ງ ສາມາດຈ່າຍໄຟຟ້າ 25 mA ຢ່າງສະໝໍ່າສະເໝີ ເປັນເວລາ 30 ວັນ ຈຶ່ງໝົດ ຖາມວ່າ ປະລິມານໄຟຟ້າທັງໝົດຂອງໝໍ້ໄຟຟ້າດັ່ງກ່າວແມ່ນເທົ່າໃດ?
ກ. 64,8 KC ຂ. 648 KC ຄ. 6 480 KC ງ. 64 800 KC

6. ຄວາມແຮງເຄື່ອນໄຟຟ້າຄວາມຮ້ອນຂຶ້ນກັບປັດໄຈຫຍັງແດ່?
ກ. ຄວາມຮ້ອນແລະອຸນຫະພູມ ຂ. ທາດແທ້ຂອງໂລຫະ
ຄ. ຄວາມແຕກຕ່າງຂອງອຸນຫະພູມ ງ. ທາດແທ້ຂອງໂລຫະ ແລະ ຄວາມແຕກຕ່າງຂອງອຸນຫະພູມ

7. "ມວນສານຂອງທາດທີ່ຖືກປົດປ່ອຍອອກຢູ່ແຕ່ລະຂົ້ວຂອງເຄື່ອງວິເຄາະໄຟຟ້າເປັນອັດຕາສ່ວນພົວພັນກົງກັບປະລິມານທາດ ແລະ ປະລິມານໄຟຟ້າບັນຈຸທີ່ແລ່ນຜ່ານທາດວິເຄາະດັ່ງກ່າວ" ແມ່ນກົດເກນຂອງໃຜ?
ກ. ທ່ານ ກູລົງ ຂ. ທ່ານ ຟາຣາໄດ ຄ. ທ່ານ ຢູນ – ແລນສ ງ. ທ່ານ ອຳແປ

8. ປັດໃຈພື້ນຖານຂອງການຖອນໝັດໄຟຟ້າໃນກາສຄວາມດັນຕໍ່າມີຫຍັງແດ່?
ກ. P (0,001 - 1 mmHg); U(200V-300V) ຂ. P (0,01 - 10 mmHg); U(200V-300V)
ຄ. P (0,001 - 1 mmHg); U(220V-300V) ງ. P (0,01 - 10 mmHg); U(220V-300V)

9. ຄຸນລັກສະນະຂອງລັງສີກາໂຕດມີຈັກຢ່າງ?
ກ. 5 ຂ. 6 ຄ. 7 ງ. 8

10. ຜົນລົບລະດັບໄຟຟ້າລະຫວ່າງກຸ່ມກ້ອນເມກກັບໜ້າດິນທີ່ສາມາດເຮັດໃຫ້ເກີດມີຟ້າຜ່າມີຄ່າປະມານເທົ່າໃດ?
ກ. 0,1–1MV ຂ. 1–10MV ຄ. 10–100MV ງ. 100–1000MV

LIVEWORKSHEETS

**II. ຈົ່ງໝາຍ "ຖືກ" ຫຼື "ຜິດ" ໃສ່ດ້ານຫຼັງຂໍ້ຄວາມຕໍ່ໄປນີ້:**

1. ທາດເຄິ່ງຊັກນຳປະເພດ N ແມ່ນທາດເຄິ່ງຊັກນຳທີ່ມີ ຈຳນວນຂຸມຫຼາຍກວ່າຈຳນວນເອເລັກຕຣົງ

2. ທາດເຄິ່ງຊັກນຳປະເພດ P ແມ່ນທາດເຄິ່ງຊັກນຳທີ່ມີ ຈຳນວນເອເລັກຕຣົງ ໜ້ອຍກວ່າຈຳນວນໂປຣຕົງ

3. ທາດແທ້ຂອງກະແສໄຟຟ້າໃນສູນຍາກາດແມ່ນ ກະແສການເຄື່ອນທີ່ຂອງບັນດາເອເລັກຕຣົງຈາກຂົ້ວອາໂນດ ໄປຫາຂົ້ວກາໂຕດ

4. ດີໂອດເປັນເຄື່ອງເອເລັກໂຕຣນິກທີ່ຜະລິດຈາກທາດເຄິ່ງນຳໄຟຟ້າຊະນິດໜຶ່ງ ມີຄຸນລັກສະນະເຮັດໃຫ້ກະແສໄຟຟ້າທີ່ແລ່ນຜ່ານໄປໄດ້ທິດທາງດຽວເທົ່ານັ້ນ. ເພິ່ນໃຊ້ດີໂອດໃນວົງຈອນດັດກະແສໄຟຟ້າສະຫຼັບໃຫ້ເປັນກະແສໄຟຟ້າກົງ

5. ທຣານສິສເຕີປະກອບດ້ວຍ 3 ຂາ; ຂາທີ່ຕໍ່ໃສ່ກັບສ່ວນກາງເອີ້ນວ່າ:ຂາພື້ນ, ຂາທີ່ຕໍ່ໃສ່ເບື້ອງໜຶ່ງເອີ້ນວ່າ:ຂາປ່ອຍ ສ່ວນຂາທີ່ຕໍ່ກັບເບື້ອງທີ່ຍັງເຫຼືອເອີ້ນວ່າ:ຂາຮັບ ຫຼື ຂາເກັບ

6. ທຣານສິສເຕີປະກອບດ້ວຍ 3 ຂາຄື: ຂາພື້ນ ສັນຍາລັກດ້ວຍ B(Base), ຂາປ່ອຍ ສັນຍາລັກດ້ວຍ C(Collector) ແລະ ຂາຮັບ ສັນຍາລັກດ້ວຍ E (Emitter)

**III. ຈົ່ງຕື່ມຄຳໃສ່ບ່ອນວ່າງໃຫ້ຖືກຕ້ອງ:**

1. ແສງທີ່ແຜ່ອອກຈາກບໍ່ແສງໜຶ່ງ ກະຈາຍອອກໄປທຸກທິດອ້ອມຮອບບໍ່ແສງນັ້ນ, ເຄິ່ງເສັ້ນຊື່ທີ່ຂີດອອກຈາກບໍ່ແສງ ໄປຕາມທິດທາງເຄື່ອນທີ່ຂອງແສງ ເອີ້ນວ່າ: ..............................

2. ກຸ່ມຂອງລັດສະໝີແສງທີ່ປະກອບເຂົ້າກັນເອີ້ນວ່າ: ..............................

3. ເພິ່ນຈຳແນກວັດຖຸຕາມການຜ່ານຂອງແສງອອກເປັນ......ປະເພດ ຄື:
   - ວັດຖຸທີ່ແສງຜ່ານໄດ້ດີເອີ້ນວ່າ: ..............................
   - ວັດຖຸທີ່ແສງຜ່ານໄດ້ຈຳນວນໜຶ່ງເອີ້ນວ່າ: ..............................
   - ວັດຖຸທີ່ແສງຜ່ານບໍ່ໄດ້ເອີ້ນວ່າ: ..............................

**IV. ຈົ່ງອ່ານບົດເລກ ແລ້ວຕອບຄຳຖາມລຸ່ມນີ້:**

1. ແວ່ນກົງຫຼຸບມີໜ້າລັດສະໝີກົ່ງ 10 Cm. ຖາມວ່າຮູບທີ່ໄດ້ຈະຢູ່ຫ່າງຈາກແວ່ນກົ່ງໄລຍະເທົ່າໃດ ເມື່ອ:
   ກ. ວັດຖຸຈິງຢູ່ຫ່າງຈາກແວ່ນໄລຍະ 1,5 Cm ຕອບ:
   ຂ. ວັດຖຸຈິງຢູ່ຫ່າງຈາກແວ່ນໄລຍະ 0,8 Cm ຕອບ:
   ຄ. ວັດຖຸຈິງຢູ່ຫ່າງຈາກແວ່ນໄລຍະ 0,6 Cm ຕອບ:
   ງ. ວັດຖຸຈິງຢູ່ຫ່າງຈາກແວ່ນໄລຍະ 0,25 Cm ຕອບ:

2. ເພິ່ນວາງວັດຖຸຈິງຂະໜາດ 2Cm ຕັ້ງສາກເທິງແກນຕົ້ນຂອງເລນສວດອັນໜຶ່ງທີ່ມີໄລຍະສຸມ 20 Cm ແລະຫ່າງຈາກເລນໄລຍະ x. ຈົ່ງຊອກຫາຂະໜາດຂອງຮູບທີ່ເກີດຂຶ້ນຜ່ານເລນດັ່ງກ່າວ ເມື່ອ:
   ກ. x = 10 Cm ຕອບ:
   ຂ. x = 15 Cm ຕອບ:
   ຄ. x = 20 Cm ຕອບ:
   ງ. x = 30 Cm ຕອບ:

3. ເຄື່ອງວິເຄາະໄຟຟ້າອັນໜຶ່ງບັນຈຸທາດລະລາຍ ນິຕຣາດເງິນ. ສົ້ນອາໂນດຂອງເຄື່ອງວິເຄາະດັ່ງກ່າວເຮັດດ້ວຍເງິນ, ຄວາມຕ້ານຂອງເຄື່ອງວິເຄາະແມ່ນ 2 ໂອມ, ຜົນລົບລະດັບໄຟຟ້າຂອງເຄື່ອງວິເຄາະແມ່ນ 10 V. ຈົ່ງຄິດໄລ່ມວນສານຂອງເງິນທີ່ໄປຕິດຢູ່ຂົ້ວການໂຕດເມື່ອ
   ກ. I = 5A; t = 2 h ຕອບ:
   ຂ. I = 2,5A; t = 1h ຕອບ:
   ຄ. I = 1,5A; t = 5h ຕອບ:
   ງ. I = 3A; t = 3h ຕອບ:

LIVEWORKSHEETS